ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

............................

ແຂວງໄຊຍະບູລີ

ເລກທີ 510 /ຈຂ.ຊຍ

ໄຊຍະບູລີ, ວັນທີ 02/6/ 2020

# ຂໍ້ຕົກລົງ
# ວ່າດ້ວຍ ການຄຸ້ມຄອງ ແລະ ການພັດທະນາ ຊົນລະປະທານ

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກຄອງ ທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ພາກທີ III, ໝວດທີ 4, ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ ຂອງເຈົ້າແຂວງ, ເຈົ້າຄອງນະ ຄອນ;
- ອີງຕາມ ກົດໝາຍ ວ່າດ້ວຍຊົນລະປະທານ ສະບັບເລກທີ 26/ສພຊ, ລົງວັນທີ 14 ທັນວາ 2012. ໝວດທີ I ມາດຕາ 4 ມາດຕາ 5, ມາດຕາ 6;
- ອີງຕາມ ມະຕິຂອງກອງປະຊຸມ ສະພາປະຊາຊົນແຂວງໄຊຍະບູລີ ກ່ຽວກັບການຮັບຮອງເອົາ ຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງ ແລະ ພັດທະນາຊົນລະປະທານ, ສະບັບເລກທີ 035/ສພຂ.ຊຍ, ລົງວັນທີ 31 ມັງກອນ 2020.

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ການພັດທະນາ ລະບົບຊົນລະປະທານ, ເພື່ອແນ່ໃສ ໃຫ້ກຸ່ມຜູ້ໃຊ້ນ້ຳທີ່ມີຄວາມເຂັ້ມແຂງ, ມີກອງທຶນສະສົມ ສາມາດແກ້ໄຂບັນຫາຊົນລະປະທານໄດ້ຢ່າງທັນການ, ຊົນລະປະທານໄດ້ມີການນຳໃຊ້ຢ່າງມີປະສິດທິຜົນ, ມີຄວາມຍືນຍົງ ໃນຂອບເຂດທົ່ວແຂວງໄຊຍະບູລີ.

### ມາດຕາ 2 ນິຍາມ ລະບົບຊົນລະປະທານ

ລະບົບຊົນລະປະທານ ແມ່ນລະບົບການສົ່ງນ້ຳເຂົ້າສູ່ເນື້ອທີ່ການຜະລິດກະສິກຳເປັນຕົ້ນແມ່ນ ເນື້ອທີ່ນາ, ໜອງລ້ຽງສັດນ້ຳ, ເນື້ອທີ່ສວນ ແລະ ອື່ນໆ. ລະບົບຊົນລະປະທານປະກອບມີ ຫົວງານ( ຕົວຝາຍ, ເຂື່ອນ, ສະຖານີສູບນ້ຳ, ປະຕູນ້ຳ....), ລະບົບທົດ ( ຄອງເໝືອງ ແມ່, ຄອງຊອຍ ຂັ້ນ 2, ຂັ້ນ 3 ແລະ ຄັນນາຄູ່, ລະບົບຝົນຝອຍ ) ແລະ ລະບົບລະບາຍ.

### ມາດຕາ 3 ອະທິບາຍຄຳຊັບ

1. ລະບົບທົດຊົນລະປະທານ: ໝາຍເຖິງ: ຫົວງານ, ຄອງເໝືອງແມ່, ຄອງເໝືອງຂັ້ນສອງ, ຄອງເໝືອງຂັ້ນສາມ, ຄອງຄັນນາຄູ່, ອາຄານຕາມຄອງ, ລວມທັງທາງລຽບຕາມຄອງ ແລະ ເນື້ອທີ່ນາ;ຂ